10. ອອກອະນຸຍາດການສ້າງຕັ້ງປະເພດສາງຂອງພາສີ, ຮ້ານຄ້າປອດພາສີ, ເຂດບໍລິການຂົນສົ່ງ ແລະ ການດໍາເນີນທຸລະກິດປະກັນໄພ;
11. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ, ປະຕິບັດນະໂຍບາຍ ແລະ ວິໄນຕໍ່ພະນັກງານ-ລັດຖະກອນ ທີ່ຂຶ້ນກັບການຄຸ້ມຄອງຂອງກະຊວງການເງິນ ລວມທັງສາມຂະແໜງສາຍຕັ້ງ: ພາສີ, ສ່ວຍສາອາກອນ ແລະ ຄັງເງິນແຫ່ງຊາດ ທີ່ປະຈໍາຢູ່ທ້ອງຖິ່ນ;
12. ແຕ່ງຕັ້ງ, ສັບປ່ຽນຕໍາແໜ່ງ ຄະນະສະພາບໍລິຫານ, ປົດຕໍາແໜ່ງຄະນະອໍານວຍການວິສາຫະກິດລັດລົງທຶນທີ່ລັດຖະບານມີສິດແຕ່ງຕັ້ງ ຕາມກໍານົດວາລະ ຫຼື ກ່ອນວາລະ ອີງຕາມສະພາບການດໍາເນີນທຸລະກິດ ຫຼື ຕາມການປະຕິບັດໜ້າທີ່ ຫຼື ຄວາມຮຽກຮ້ອງຕ້ອງການອື່ນໆ ຂອງການຈັດຕັ້ງ;
13. ກວດກາ-ກວດການ ບັນດາຂະແໜງການເງິນຂັ້ນສູນກາງ, ທ້ອງຖິ່ນ, ບຸກຄົນ, ນິຕິບຸກຄົນ ກ່ຽວກັບການປະຕິບັດກົດໝາຍ ແລະ ລະບຽບການ ທາງດ້ານການເງິນ;
14. ຄຸ້ມຄອງ ແລະ ນໍາໃຊ້ ຊັບສິນ, ວັດຖຸອຸປະກອນຕ່າງໆ ແລະ ງົບປະມານປະຈໍາປີຂອງກະຊວງການເງິນ ທີ່ສະພາແຫ່ງຊາດຮັບຮອງ;
15. ປະຕິບັດສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງລັດຖະບານ.

## ໝວດທີ 3
### ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

**ໂຄງປະກອບກົງຈັກຂອງກະຊວງການເງິນ ປະກອບດ້ວຍ:**

1. ຫ້ອງການກະຊວງ;
2. ກົມຈັດຕັ້ງ ແລະ ພະນັກງານ;
3. ກົມກວດກາ;
4. ກົມບັນຊີ;
5. ກົມງົບປະມານແຫ່ງລັດ;
6. ກົມການເງິນຕ່າງປະເທດ ແລະ ຄຸ້ມຄອງໜີ້ສິນ;
7. ກົມຄຸ້ມຄອງຊັບສິນຂອງລັດ;
8. ກົມຄຸ້ມຄອງ, ພັດທະນາລັດວິສາຫະກິດ ແລະ ການປະກັນໄພ;
9. ກົມນະໂຍບາຍການເງິນ ແລະ ນິຕິກໍາ;
10. ກົມສະສົມແຫ່ງລັດ;
11. ສະຖາບັນພັດທະນາຂໍ້ມູນຂ່າວສານການເງິນ;
12. ສະຖາບັນເສດຖະກິດ-ການເງິນ;

**ກົງຈັກຄຸ້ມຄອງຕາມສາຍຕັ້ງຢູ່ຂັ້ນສູນກາງ:**

1. ກົມພາສີ;
2. ກົມສ່ວຍສາອາກອນ;
3. ຄັງເງິນແຫ່ງຊາດ.